ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
--------===ooo===--------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5.
ຖະໜົນ: ໄກສອນພົມວິຫານ, ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທລະສັບ: (+856 21)418062 – 6

ນະຄອນຫຼວງວຽງຈັນ,ວັນທີ: 11 ທັນວາ 2023

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ເຂົ້າຮ່ວມພິທີມອບ-ຮັບລາງວັນ ການເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2023



ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ເຂົ້າຮ່ວມພິທີມອບ-ຮັບລາງວັນການເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2023 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ (LSX Disclosure and CG Award 2023), ທີ່ ຕະຫຼາດຫລັກຊັບລາວ ຊັ້ນ 8. ເວລາ 9:00-12:00ໂມງ. ເຊິ່ງເປັນງານມອບ-ຮັບລາງວັນ ສຳຫລັບບໍລິສັດຈົດທະບຽນໃນຕະຫຼາດຫລັກຊັບລາວ ທີ່ມີຜົນງານດີເດັ່ນ, ເຊິ່ງໃນປີນີ້ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໄດ້ຮັບໃບຍ້ອງຍໍ ຈຳນວນ 2 ລາງວັນໄດ້ແກ່:

ໃບຍ້ອງຍໍ ການເປີດເຜີຍຂໍ້ມູນດີເດັ່ນປະເພດ I ປະຈຳປີ 2023



ທ່ານຜູ້ອຳນວຍການໃຫ່ຍຕະຫລາດຫລັກຊັບລາວ ທ່ານ ສຸພັກ ຖິ່ນໄຊພອນ ໃຫ້ກຽດເປັນຜູ້ມອບລາງວັນ ໃນຄັ້ງນີ້ ແກ່ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຕ່າງໜ້າຮັບໂດຍ ທ່ານ ມານິບ ຕຣິລິດວິໄລ ຜູ້ອຳນວຍການ ມຫທຊ.



ໃບຍ້ອງຍໍການຄຸ້ມຄອງບໍລິຫານດີເດັ່ນປະເພດ II ປະຈຳປີ 2023

.



ທ່ານ ນ. ຝອງຈິນດາ ແສງສຸລິວົງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ກຽດເປັນຜູ້ມອບລາງວັນ ໃນຄັ້ງນີ້ແກ່ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ຕ່າງໜ້າຮັບໂດຍ ທ່ານ ມານິບ ຕຣິລິດວິໄລ ຜູ້ອຳນວຍການ ມຫທຊ.



ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ເປັນບໍລິສັດໜຶ່ງທີ່ໃສ່ໃຈເລື່ອງການເປີດເຜີຍຂໍ້ມູນການດຳເນີນການ ແລະ ການເຄື່ອນໄຫວທຸລະກິດຕ່າງໆ ຂອງບໍລິສັດ ໃຫ້ແກ່ມວນຊົນ ແລະ ນັກລົງທຶນ ຢ່າງຄົບຖ້ວນ ຈະແຈ້ງ ແລະ ທັນເວລາ ແລະ ຍຶດໝັ້ນໃນການຄຸ້ມຄອງບໍລິຫານທີ່ດີ.